ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງອັດຕະປື

ເລກທີ: 02 /ຈຂ.ອປ

ອັດຕະປື, ວັນທີ: 25.....01...2019.

# ຄໍາສັ່ງແນະນໍາ

ວ່າດ້ວຍການຍົກຍ້າຍເຮືອນສໍາເລັດຮູບຈາກຈຸດບ້ານຕໍາມໍ່ຍອດໄປຫາຈຸດບ້ານປີນດົງ

ຈໍານວນ 49 ຫຼັງ, ຈາກດົງບາກ 4ຫຼັງ ແລະ ສັບຊ້ອນຄືນຢູ່ຈຸດບ້ານດອນບົກ.

ເຖິງ: - ກອງບັນຊາການທະຫານແຂວງ;

- ພະແນກ ໂຍທາທິການແລະຂົນສົ່ງ;
- ພະແນກ ພະລັງງານແລະບໍ່ແຮ່;
- ເຈົ້າເມືອງໆສະໜາມໄຊ
- ບໍລິສັດ ທີເຄ ໂຊຊົງ ຈໍາກັດ.

- ອີງຕາມ: ການປຶກສາຫາລື/ຄວາມເປັນເອກະພາບຂອງຄະນະນໍາແຂວງ ແລະ ກອງເລຂາຂັ້ນສູນກາງ ຄັ້ງວັນທີ 25/01/2018.

ເພື່ອເປັນການຜັນຂະຫຍາຍທິດຊີ້ນໍາຂອງ ທ່ານ ນາຍົກລັດຖະມົນຕີ ເຮັດແນວໃດ ໃຫ້ໄດ້ຍົກຍ້າຍ ປະຊາຊົນ ອອກຈາກເຕັນ ໄປຢູ່ເຮືອນຊົ່ວຄາວ ໄວເທົ່າທີ່ຈະໄວ້ໄດ້ ບໍ່ໃຫ້ກາຍ ວັນທີ 15/01/2019, ຜ່ານມາເປັນ ການລໍຖ້າຄໍາຕອບ/ການດໍາເນີນຂອງບໍລິສັດຜູ້ຈັດຊື້/ນໍາສົ່ງເຮືອນແຕ່ກໍ່ບໍ່ເປັນຜົນດີ ບໍ່ທັນກັບເວລາ.

ເຈົ້າແຂວງອອກຄໍາສັ່ງແນະນໍາດັ່ງນີ້:

ມາດຕາ1: ມອບໃຫ້ພະແນກ ຍທຂ ແຂວງ, ກອງບັນຊາການທະຫານແຂວງ ເປັນໃຈກາງປະສານສົມທົບກັບບໍລິສັດ ທີເຄໂຊຊົງແລະພາກສ່ວນກ່ຽວຂ້ອງ ເພື່ອຍົກຍ້າຍເຮືອນສໍາເລັດຮູບຈາກຈຸດບ້ານຕໍາມໍ່ຍອດໄປປະກອບ/ ຕິດຕັ້ງ ຢູ່ ຈຸດບ້ານ ປີນດົງ ຈໍານວນ 49 ຫຼັງ, ຈາກຈຸດດົງບາກ 4 ຫຼັງ ແລະ ຄົ້ນຄ້ວາສັບຊ້ອນ ເຮືອນສໍາເລັດຮູບ ຢູ່ຈຸດບ້ານ ດອນບົກໃຫ້ພຽງພໍກັບຄອບຄົວປະຊາຊົນທີ່ຍັງບໍ່ທັນໄດ້ເຂົ້າຢູ່ເຮືອນຊົ່ວຄາວ.

ມາດຕາ2: ມອບໃຫ້ຫ້ອງວ່າການແຂວງເປັນໃຈກາງຮ່ວມກັບພາກສ່ວນກ່ຽວຂ້ອງຂັ້ນຕ່າງໆຕິດຕາມຊຸກຍູ້ການຈັດຕັ້ງ ປະຕິບັດຄໍາສັ່ງແນະນໍາສະບັບນີ້ໃຫ້ໄດ້ຮັບການຈັດຕັ້ງປະຕິບັດແລະມີຜົນສໍາເລັດໂດຍໄວ.

- ຄ່າສິ້ນເປືອງຕ່າງໆໃນການຍົກຍໍແລະຂົນສົ່ງ ແມ່ນແຂວງເປັນຜູ້ຮັບຜິດຊອບ
- ຄ່າມ້າງແລະປະກອບຕິດຕັ້ງ ແມ່ນບໍລິສັດທີເຄ ໂຊຊົງ ເປັນຜູ້ຮັບຜິດຊອບ.

ມາດຕາ3: ຄໍາສັ່ງແນະນໍາສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງ

ແຂວງອັດຕະປື
ເຈົ້າແຂວງແຂວງອັດຕະປື

ເລັດ ໄຊຍະພອນ